**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAORUCO ເລກທີ: 19/ລບ-ບສ
ປາກເຊ, ວັນທີ 04 ເດືອນ 08 ປີ 2023

# ກົດລະບຽບວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດ ກັບ ຊຸມຊົນທ້ອງຖິ່ນ

- ອີງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ FSC-STD-LAO-01-2020;
- ພິຈາລະນາການສະເໜີຂອງຫົວໜ້າຫ້ອງການບໍລິສັດ ແລະ ຄະນະ FSC ບໍລິສັດ.

**ມາດຕາ 1.** ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ

ເມື່ອມີຂໍ້ຂັດແຍ່ງກ່ຽວກັບສິດນຳໃຊ້ທີ່ດິນ, ການຄຸ້ມຄອງ, ນຳໃຊ້ປ່າ ແລະ ກຳມະສິດກ່ຽວກັບຊັບສິນ ຫຼື ເຮັດໃຫ້ເກີດມີມົນລະພິດກະທົບເຖິງສິ່ງແວດລ້ອມລະຫວ່າງບໍລິສັດ Daklaoruco ກັບ ປະຊາຊົນ ຫຼື ຊຸມຊົນທ້ອງຖິ່ນ (ແຕ່ລະຝ່າຍ). ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຈະປະຕິບັດດັ່ງນີ້:

- ນິຕິມ ແລະ ປະຊາຊົນ ຫຼື ຊຸມຊົນທ້ອງຖິ່ນ ຖ້າເກີດມີຂໍ້ຂັດແຍ່ງຕ້ອງໄດ້ພົບປະ, ແລກປ່ຽນ, ເຈລະຈາ ແລະ ພ້ອມກັນແກ້ໄຂໂດຍສັນຕິ.

- ໃນກໍລະນີທີ່ຄູ່ກໍລະນີຫາກໄກ່ເກ່ຍກັນບໍ່ສຳເລັດແມ່ນມີສິດຂຽນຄຳຮ້ອງຟ້ອງ ແລະ ຮ່າງບົດບັນທຶກ (ຖ້າມີ) ສົ່ງໃຫ້ອຳນາດການປົກຄອງບ້ານ ແລະ ບໍລິສັດເພື່ອແກ້ໄຂ.

- ອີງໃສ່ຄຳຮ້ອງຂອງແຕ່ລະຝ່າຍ, ບໍລິສັດຈະປະສານກັບ ອຳນາດການປົກຄອງບ້ານ ຈັດຕັ້ງການສືບສວນ ສອບສວນ, ປະເມີນ ໂດຍອີງໃສ່ລະບຽບກົດໝາຍເພື່ອພິຈາລະນາ. ການແກ້ໄຂຕ້ອງຮັບປະກັນຄວາມຍຸດຕິທຳ ແລະ ເໝາະສົມ.

- ໃນກໍລະນີ ອຳນາດການປົກຄອງບ້ານ ແລະ ບໍລິສັດ ແກ້ໄຂຂໍ້ຂັດແຍ່ງບໍ່ສຳເລັດ ຫຼື ເກີນສິດອຳນາດ, ການແກ້ໄຂຈະຕ້ອງໄດ້ດຳເນີນຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 2.** ຄຳໝັ້ນສັນຍາກ່ຽວກັບສິດນຳໃຊ້ທີ່ດິນ

ບໍລິສັດ ແລະ ບັນດາຄອບຄົວທີ່ອາໄສຢູ່ໃນພື້ນທີ່ ຫຼື ໃນເຂດທີ່ຕິດກັບເຂດແດນດິນຂອງບໍລິສັດແມ່ນໃຫ້ຄຳໝັ້ນສັນຍາຕໍ່ກັນວ່າຈະບໍ່ບຸກລຸກຫຼືມີຂໍ້ຂັດແຍ່ງຕໍ່ກັນ. ເຄົາລົບສິດນຳໃຊ້ທີ່ດິນ, ທີ່ຢູ່ອາໄສ, ດິນສວນ, ດິນກະສິກຳຂອງແຕ່ລະຝ່າຍ. ທັງສອງຝ່າຍຍາມໃດກໍ່ສ້າງເງື່ອນໄຂສະດວກໃຫ້ກັນ ແລະ ກັນ ເພື່ອຮ່ວມກັນພັດທະນາ, ໂດຍບໍ່ໃຫ້ເກີດຜົນກະທົບອັນບໍ່ດີເຖິງການປູກຝັງ, ການຜະລິດ ແລະ ດຳເນີນທຸລະກິດຂອງແຕ່ລະຝ່າຍ.

ຖ້າຫາກວ່າໃນຂະບວນການຜະລິດເກີດມີຜົນກະທົບ ຫຼື ທຳລາຍປ່າໄມ້, ທີ່ດິນ ຫຼື ຊັບສິນອື່ນໆ (ທີ່ດິນ, ເຄື່ອງປູກຂອງຝັງ, ເຄື່ອງມືການຜະລິດ, ເຮືອນຊານ…) ຂອງອີກຝ່າຍໜຶ່ງແມ່ນຕ້ອງມີການເຈລະຈາ ແລະ ຊົດເຊີຍຜົນເສຍຫາຍ (ຖ້າມີ) ຕາມລະບຽບກົດໝາຍ.

**ມາດຕາ 3.** ຄຳໝັ້ນສັນຍາກ່ຽວກັບການປົກປັກຮັກສາຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ, ແຫຼ່ງນ້ຳ, ຕ້ານການເຊາະເຈື່ອນ

ບໍລິສັດ ແລະ ອຳນາດການປົກຄອງບ້ານໃຫ້ຄຳໝັ້ນສັນຍາຕໍ່ກັນວ່າຈະຮ່ວມກັນກໍ່ສ້າງ, ປົກປັກຮັກສາ ຊັບພະຍາກອນປ່າໄມ້, ພິເສດແມ່ນປ່າປ້ອງກັນ, ປ່າສະຫງວນ. ບໍ່ອະນຸຍາດໃຫ້ຝ່າຍໃດຝ່າຍໜຶ່ງຂຸດຄົ້ນ, ຕັດໄມ້ເຂົ້າໃນຂອບເຂດປ່າແຫຼ່ງນ້ຳ, ປ່າທຳມະຊາດຖ້າບໍ່ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງຂອງລັດ.

ເພື່ອເປັນການປົກປັກຮັກສາແຫຼ່ງນ້ຳຮັບໃຊ້ແກ່ການຜະລິດ ແລະ ຊີວິດປະຈຳວັນຂອງປະຊາຊົນ. ບໍລິສັດ ແລະ ອຳນາດການປົກຄອງບ້ານໃຫ້ຄຳໝັ້ນສັນຍາຈະບໍ່ນຳໃຊ້ຢາປາບສັດຕູພືດທີ່ມີສ່ວນປະກອບສານເຄມີຫ້າມນຳໃຊ້ຕາມລະບຽບຂອງ ສປປ ລາວ, WHO ແລະ FSC. ຫຼຸດຜ່ອນການນຳໃຊ້ຢາທີ່ມີສ່ວນປະກອບສານເຄມີເພື່ອປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 4.** ແກ້ໄຂການລະເມີດຂອງແຕ່ລະຝ່າຍ

ໃນກໍລະນີບໍລິສັດ ຫຼື ຊຸມຊົນລະເມີດສັນຍາກ່ຽວກັບການຄຸ້ມຄອງປ່າໄມ້, ຕ້ານ ແລະ ສະກັດກັ້ນໄຟໄໝ້ປ່າ ຫຼື ລະເມີດບັນດາຄຳໝັ້ນສັນຍາທີ່ໃຫ້ຕໍ່ກັນກ່ຽວກັບສິດນຳໃຊ້ທີ່ດິນ, ປົກປັກຮັກສາສິ່ງແວດລ້ອມຖ້າຝ່າຍໃດລະເມີດນອກຈາກການຊົດເຊີຍຜົນເສຍຫາຍຍ້ອນຕົນເອງສ້າງຂຶ້ນແລ້ວຍັງຕ້ອງຖືກປັບໄໝຕາມລະບຽບທີ່ວາງອອກ.

ນອກຈາກນັ້ນຝ່າຍທີ່ລະເມີດຍັງຕ້ອງສຳຫຼວດຕົນເອງຕໍ່ອຳນາດການປົກຄອງບ້ານ (ຝ່າຍຊຸມຊົນ) ແລະ ຕໍ່ບໍລິສັດ (ຝ່າຍບໍລິສັດ) ແລະ ໃຫ້ຄຳໝັ້ນສັນຍາວ່າຈະດັດແກ້, ປັບປຸງຕົນເອງ.

**ມາດຕາ 5.** ຄວາມຮັບຜິດຊອບໃນການຕິດຕາມ, ສັງລວມ ແລະ ລາຍງານ

ບັນດາຫົວໜ້າຫ້ອງການ, ບັນດາໜ່ວຍງານທີ່ສັງກັດຢູ່ບໍລິສັດມີຄວາມຮັບຜິດຊອບຕິດຕາມກວດກາການຈັດຕັ້ງປະຕິບັດກົດລະບຽບສະບັບນີ້. ເຮັດບົດລາຍງານສົ່ງໃຫ້ຫ້ອງການບໍລິສັດ (ບົດລາຍງານ 6 ເດືອນ ແລະ 12 ເດືອນ). ຫົວໜ້າ/ຮອງຫົວໜ້າຫ້ອງການ ບໍລິສັດ ມີໜ້າທີ່ສັງລວມ ແລະ ລາຍງານໃຫ້ຄະນະ ບໍລິສັດ ກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບສະບັບນີ້.

**ມາດຕາ 6.** ກົດລະບຽບສະບັບນີ້ມີຜົນນຳໃຊ້ນັບແຕ່ລົງລາຍເຊັນເປັນຕົ້ນໄປ. ໃນຂະບວນການຈັດຕັ້ງປະຕິບັດຖ້າມີຄວາມຕ້ອງການປັບປຸງ, ເພີ່ມເຕີມ, ບັນດາໜ່ວຍງານ ແລະ ບຸກຄົນທີ່ຮັບຜິດຊອບຕ້ອງລາຍງານໃຫ້ຄະນະນຳຂອງ ບໍລິສັດ ພິຈາລະນາ, ເຫັນດີຕົກລົງ.

**ອຳນວຍການບໍລິສັດ**

*Nguyễn Đức Hạnh*

**ບ່ອນນຳສົ່ງ:**

- ຄະນະອຳນວຍການ ບສ;
- ຫ້ອງການ ບສ;
- ບັນດາໜ່ວຍງານ;
- ສຳເນົາຂາອອກ-ຂາເຂົ້າ, ຄະນະ FSC.